ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ:...10.../ຈຂ.ອປ

ອັດຕະປື, ວັນທີ:..11 ກໍລະກົດ 2018

# ຄໍາສັ່ງ

## ວ່າດ້ວຍ ການກວດກາເຄື່ອງກົນຈັກ, ພາຫະນະ ທີ່ນໍາເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫລຸດຜ່ອນ ແລະ ບັນດາພາຫະນະທຸກປະເພດ ທີ່ນໍາເຂົ້າບໍ່ຖືກຕ້ອງ.

ເຖິງ: ບັນດາໂຄງການລົງທຶນຕ່າງໆ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ທີ່ຢູ່ພາຍໃນແຂວງອັດຕະປື.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ຕຸລາ 2015 ໝວດທີ IV ມາດຕາ 20 ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ: ກົດໝາຍວ່າດ້ວຍພາສີ, ສະບັບເລກທີ 04 /ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ, ເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.
- ອີງໃສ່ ໜັງສືສະເໜີ ຂອງກອງກວດກາພາສີປະຈໍາ ແຂວງອັດຕະປື, ສະບັບເລກທີ 051/ກກພສ.ອປ, ລົງວັນທີ 05 ມິຖຸນາ 2018.

ເພື່ອເປັນການເພີ່ມທະວີໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນໆ ແລະ ລະບຽບການທີ່ກ່ຽວຂ້ອງສໍາລັບການຕິດຕາມ, ກວດກາບັນດາພາຫະນະທີ່ບໍ່ຖືກຕ້ອງ ແລະ ປ່ຽນກໍາມະສິດ ທີ່ນໍາເຂົ້າໃນລະບອບຍົກເວັ້ນ, ງົດເກັບ ແລະ ເສຍພາສີຫຼຸດຜ່ອນທີ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ໄດ້ຄອບຄອງເພື່ອຮັບໃຊ້ພາຍໃນຄອບຄົວ ທີ່ຍັງບໍ່ທັນໄດ້ແຈ້ງເສຍພາສີ-ອາກອນຕາມລະບຽບ.

## ເຈົ້າແຂວງ ອອກຄໍາສັ່ງ:

1. ໃຫ້ກອງກວດກາພາສີປະຈໍາ ແຂວງອັດຕະປື ລົງເຄື່ອນໄຫວຈັດຕັ້ງປະຕິບັດ ຕິດຕາມ, ກວດກາຄືນກ່ຽວກັບເຄື່ອງກົນຈັກ, ພາຫະນະຂອງບັນດາໂຄງການລົງທຶນຕ່າງໆ. ຢູ່ພາຍໃນແຂວງທີ່ໄດ້ຮັບການຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫລຸດຜ່ອນ ຕາມລະບຽບການໄດ້ກໍານົດໄວ້.

2. ໃຫ້ເຂັ້ມງວດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ລົງເຄື່ອນໃຫວຕິດຕາມ, ກວດກາ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ກ່ຽວກັບບັນດາພາຫະນະເຖື່ອນທຸກປະເພດທີ່ນຳເຂົ້າມາໃຊ້ບໍ່ຖືກຕ້ອງ ແລະ ບໍ່ຖືກຕາມເປົ້າໝາຍທີ່ວາງໄວ້ໃນການຄອບຄອງໃນທຸກກໍລະນີຢູ່ແຕ່ລະບ້ານ ໃນ 05 ຕົວເມືອງຂອງ ແຂວງອັດຕະປື.
3. ໃຫ້ສືບຕໍ່ຈັດຕັ້ງປະຕິບັດແຈ້ງການຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 2833/ກງ, ລົງວັນທີ 30 ສິງຫາ 2016. ເລື່ອງ ການແກ້ໄຂພາຫະນະນຳເຂົ້າບໍ່ຖືກຕ້ອງ ແລະ ການແຈ້ງເສຍພາສີ ປ່ຽນກຳມະສິດພາຫະນະ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ ທີ່ຍັງບໍ່ທັນໄດ້ເສຍພາສີ-ອາກອນ ຕາມກົດໝາຍ ແລະ ລະບຽບການກຳນົດ.
4. ມອບໃຫ້ການຈັດຕັ້ງທຸກພາກສ່ວນເປັນເຈົ້າການ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງລັດຖະການພາສີ.
5. ຄຳສັ່ງສະບັບນີ້ມີຜົນບັງຄັບໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫລັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ ຂໍ້ຕົກລົງ ແລະ ລະບຽບການໃດ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ເຈົ້າແຂວງໆ ອັດຕະປື**

ເລັດ ໄຊຍະພອນ